# ກະຊວງກະສິກຳ ແລະ ປ່າໄມ້

# ກົມແຜນການ ແລະ ການເງິນ

# ໂຄງການຜະລິດກະສິກຳເປັນສິນຄ້າ

# Lao Agriculture Competitiveness Project (LACP)

# ບົດແນະນຳ

# ຂະບວນການຂໍໃບຢັ້ງຢືນການຜະລິດເມັດພັນຂອງກຸ່ມ ແລະ ຊາວກະສິກອນ







ໂຄງການຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ
Lao Agriculture Competitiveness Project

ນະຄອນຫລວງວຽງຈັນ, 7 ທັນວາ 2020

# ບົດແນະນຳ
## ຂະບວນການຂໍໃບຢັ້ງຢືນການຜະລິດເມັດພັນຂອງກຸ່ມ ແລະ ຊາວກະສິກອນ

- ອີງຕາມດຳລັດວ່າດ້ວຍແນວພັນພືດຂອງລັດຖະບານ ສະບັບເລກທີ 238/ລບ ລົງວັນທີ18 ພຶດສະພາ 2020
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3919/ກປ ລົງວັນທີ 12 ທັນວາ 2012 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ແນວພັນພືດ
- ອີງຕາມບົດແນະນຳການອອກໃບຢັ້ງຢືນຄຸນະພາບເມັດພັນເຂົ້າ ພະແນກຄຸ້ມຄອງການປູກຝັງ ຂອງກົມປູກຝັງ ສະບັບລົງວັນທີ 30 ເມສາ 2013
- ອີງຕາມຄູ່ມື ການກວດກາຄຸນນະພາບເມັດພັນເຂົ້າ ພະແນກຄຸ້ມຄອງການປູກຝັງ ຂອງກົມປູກຝັງສະບັບລົງວັນທີ 26 ຕຸລາ 2016

## I. ບົດນຳ

ໂຄງການຜະລິດກະສິກຳເປັນສິນຄ້າຢູ່ ສປປ ລາວເປັນໜຶ່ງໃນບັນດາໂຄງການບູລິມະສິດ ທີ່ນອນຢູ່ໃນແຜນການຮ່ວມມືລະຫວ່າງ ລັດຖະບານ ສປປ ລາວ ແລະ ທະນາຄານໂລກ ໃນການສະໜັບສະໜູນແຜນງານການຄໍ້າປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າລະດັບຊາດ.ໄລຍະການຈັດຕັ້ງປະຕິບັດໂຄງການ 5 ປີ ເລີ່ມແຕ່ 2018 ຫາ 2023, ຈຸດປະສົງຂອງໂຄງການດັ່ງກ່າວແມ່ນເພື່ອ ການຍົກລະດັບຕ່ອງໂສ້ມູນຄ່າການຜະລິດເປັນສິນຄ້າໃນເຂດເປົ້າໝາຍໂຄງການ. ໂຄງການດັ່ງກ່າວແມ່ນ ກວມເອົາ 05 ແຂວງ ຄື: (1) ຄຳມ່ວນ, (2) ບໍລິຄຳໄຊ, (3) ນະຄອນຫລວງວຽງຈັນ, (4) ວຽງຈັນ ແລະ (5) ໄຊຍະບູລີ, ຊຶ່ງມີພື້ນທີ່ການຈັດຕັ້ງປະຕິບັດໂຄງການປະມານ 30,000 ຮຕ. ໃນການສົ່ງເສີມການຜະລິດກະສິກຳເປັນສິນຄ້ານີ້ ພືດຫຼັກໆປະກອບມີ ເຂົ້າ, ພືດຜັກ ແລະ ສາລີ. ແຂວງ ບໍລິຄຳໄຊ ແລະ ຄຳມ່ວນ ແມ່ນ ເຂົ້າ; ແຂວງວຽງຈັນ ແລະ ນະຄອນຫລວງ ແມ່ນ ເຂົ້າ ແລະ ພືດຜັກ;ແຂວງ ໄຊຍະບູລີ ແມ່ນ ເຂົ້າ, ພືດຜັກ ແລະ ສາລີ.ເປົ້າໝາຍຂອງ ການຈັດຕັ້ງປະຕິບັດໂຄງການແມ່ນເພື່ອບັນລຸ 3 ໂຕຊີ້ວັດຫຼັກ ຊຶ່ງປະກອບມີຄືດັ່ງລຸ່ມນີ້: 1. ການຍົກລະດັບການຜະລິດໃນພື້ນທີ່ ທີ່ມີທ່າແຮງຂອງຊາວກະສິກອນທີ່ຖືກຄັດເລືອກ, 2. ການເພີ່ມຍອດຂາຍຜົນຜະລິດຂອງຊາວກະສິກອນກຸ່ມເປົ້າໝາຍ, 3. ເພີ່ມປະສິດທິພາບໂຮງສີເຂົ້າຂອງຜູ້ປະກອບການທີ່ໄດ້ຮັບການສະໜັບສະໜູນຈາກໂຄງການຜະລິດກະສິກຳເປັນສິນຄ້າຢູ່ ສປປ ລາວ.

ອົງປະກອບຂອງໂຄງການມີ 4 ອົງປະກອບຄື:1).A: ປັບປຸງປະສິດທິພາບ ແລະຄວາມຍືນຍົງໃນການຜະລິດກະສິກຳ, ອົງປະກອບ 2). B: ການເພີ່ມຂີດຄວາມສາມາດທາງການຄ້າຂາຍສິນຄ້າກະສິກຳ, ອົງປະກອບ 3). C: ຄຸ້ມຄອງໂຄງການ 4). D: ກ່ຽວກັບ ການຮັບມືກັບເຫດສຸກເສີນຂອງໄພພິບັດ.

ສຳລັບອົງປະກອບ A: ປັບປຸງປະສິດທິພາບ ແລະຄວາມຍືນຍົງໃນການເຮັດກະສິກຳແມ່ນປະກອບມີອົງປະກອບຍ່ອຍຄື:A1. ສົ່ງເສີມການນຳໃຊ້ແນວພັນເຂົ້າທີ່ດີ ແລະ ມີຄຸນນະພາບ: ສະໜັບສະໜູນສ້າງກຸ່ມແນວພັນ 68ກຸ່ມເພື່ອຜະລິດແນວພັນທີ່ໄດ້ຮັບການຢັ້ງຢືນ (ໃນເນື້ອທີ່ 964 ເຮັກຕາ) ເພື່ອສະໜອງໃຫ້ແກ່ຊາວກະສິກອນ 340 ກຸ່ມທີ່ຈະຮັບຮອງເອົາການເຮັດກະສິກຳທີ່ດີ (GAP) ໃນເນື້ອທີ່ 30,000 ເຮັກຕາພາຍໃຕ້ໂຄງການ.

ຜ່ານມາທາງກົມປູກຝັງ ຂອງກະຊວງກະສິກຳ ແລະ ປ່າໄມ້ ກໍໄດ້ສ້າງຄູ່ມືການກວດກາຄຸນນະພາບເມັດພັນເຂົ້າ ແລະ ບົດແນະນຳການອອກໃບຢັ້ງຢືນຄຸນນະພາບເມັດພັນເຂົ້າ. ແຕ່ວ່າ ເອກກະສານດັ່ງກ່າວ ຈະສະເພາະແນະນຳວິຊາການ ຂັ້ນພະແນກ ຂະແໜງປູກຝັງ

ຂອງແຂວງ, ຂັ້ນຫ້ອງການກະສິກຳເມືອງ ແລະ ຊາວກະສິກອນລວມໃນສະບັບດຽວ ບໍ່ໄດ້ພັນຂະຫຍາຍມາເປັນບົດແນະນຳຂອງກຸ່ມຫລື ຊາວກະສິກອນ ຍັງມີຄຳສັບວິຊາການເລິກ ຍາວເຮັດໃຫ້ຊາວກະສິກອນ ຍັງສັບສົນໃນການນຳໃຊ້. ນອກນັ້ນແບບຟອມທີ່ອອກມາຍັງບໍ່ທັນມີສະເພາະກຸ່ມຜະລິດ. ສະນັ້ນ, ທາງໂຄງການຜະລິດກະສິກຳເປັນສິນຄ້າແມ່ນເນັ້ນໃສ່ຮູບແບບການຜະລິດເປັນກຸ່ມ ແລະ ບໍ່ໄດ້ສະເພາະເຈາະຈົງແຕ່ເຂົ້າຈະຮັບໃຊ້ພືດອື່ນເຊັ່ນ: ພືດຜັກ,ສາລີ. ໂຄງການຈຶ່ງມີຈຸດປະສົງເພື່ອຊ່ວຍໃຫ້ຊາວກະສິກອນ ມີຄວາມເຂົ້າໃຈໄດ້ງ່າຍຂຶ້ນ ແລະ ສະດວກ ຈຶ່ງໄດ້ນຳມາດັດແປງບາງສ່ວນເພື່ອໃຫ້ແທດເໝາະແກ່ຜູ້ນຳໃຊ້.

## II. ຈຸດປະສົງ

- ເພື່ອເປັນເຄື່ອງມືອຳນວຍຄວາມສະດວກໃຫ້ແກ່ກຸ່ມຜະລິດເມັດພັນ ແລະ ຊາວກະສິກອນໃນການຂຶ້ນທະບຽນການຜະລິດເມັດພັນພືດຢ່າງມີປະສິດທິຜົນ,
- ເພື່ອສົ່ງເສີມການຜະລິດເມັດພັນພືດໃຫ້ມີທັງປະລິມານ ແລະ ຄຸນນະພາບອອກຮັບໃຊ້ການຜະລິດໄດ້ຢ່າງກວ້າງຂວາງຂຶ້ນກ່ອນເກົ່າ
- ເພື່ອແຍກໜ້າວຽກອອກເປັນພູດສຳລັບໜ້າວຽກຂອງຊາວກະສິກອນ ແລະ ສຳລັບພະນັກງານ

## III. ຂັ້ນຕອນ ແລະ ຂະບວນການຂໍຂຶ້ນທະບຽນແນວພັນພືດຂອງ ບຸກຄົນ ແລະ ກຸ່ມຜະລິດເມັດພັນ

ການເຮັດການຜະລິດກະສິກຳ ບັນຫາຕັດສິນຜົນຜະລິດສູງ ແລະ ມີຄຸນນະພາບ ເມັດພັນກໍແມ່ນນຶ່ງໃນປັດໃຈຕົ້ນຕໍ. ຍ້ອນວ່າການຜະລິດເມັດພັນ ມັນເປັນເລື່ອງທີ່ລະອຽດອ່ອນ ຕ້ອງໄດ້ເອົາໃຈໃສ່ດ້ານເຕັກນິກ. ຊາວນາ ຫລືຜູ້ຜະລິດຕ້ອງໄດ້ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບເຕັກນິກວິຊາການດັ່ງກ່າວດີພໍສົມຄວນນັບຕັ້ງແຕ່ການກຳນົດແນວພັນທີ່ຈະມາຜະລິດ, ການກຽມພື້ນທີ່ຜະລິດ, ການດຳເນີນການຜະລິດ ແລະ ບົວລະບັດຮັກສາ, ຮອດການເກັບກ່ຽວ ແລະ ຫລັງການເກັບກ່ຽວ ຕ້ອງໄດ້ເອົາໃຈໃສ່ຢ່າງແທ້ຈິງ. ສະນັ້ນ ຄວາມພ້ອມຂອງຜູ້ຜະລິດ, ເຄື່ອງມືຮັບໃຊ້ ແລະ ສິ່ງອຳນວຍຄວາມສະດວກ ຕ້ອງຖືເປັນປດໃຈສຳຄັນ.ຈຶ່ງສາມາດຮັບປະກັນການຜະລິດເມັດພັນທີ່ມີຄຸນນະພາບອອກຮັບໃຊ້ການຜະລິດ. ດັ່ງນັ້ນ, ເພື່ອປະຕິບັດຕາມເງື່ອນໄຂທີ່ກ່າວມາ ຈຶ່ງຕ້ອງມີໜ່ວຍງານຮັບຜິດຊອບ. ຜູ້ຜະລິດເມັດພັນມີຄວາມຈຳເປັນຕ້ອງໄດ້ປະຕິບັດຕາມ ລະບົບການຢັ້ງຢືນຄຸນນະພາບທາງວິຊາການກ່ຽວຂ້ອງ ໂດຍສະເພາະກົມປູກຝັງ ແລະ ຂະແໜງປູກຝັງຂອງແຂວງທີ່ເຮັດໜ້າທີ່ດັ່ງກ່າວ. ຈຶ່ງແນະນຳໃຫ້ກຸ່ມຜະລິດ ແລະ ຊາວກະສິກອນໄດ້ເອົາໃຈໃສ່ປະຕິບັດຕາມຂັ້ນຕອນດັ່ງນີ້:

### ຂັ້ນຕອນທີ1. ສຳລັບຊາວກະສິກອນ

1. ຊາວກະສິກອນ/ຜູ້ຈະຜະລິດເມັດພັນຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບເຕັກນິກການຜະລິດເມັດພັນພືດຈາກ ວິຊາການຂັ້ນສູນກາງກໍຄື: ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ວິຊາການຈາກກົມປູກຝັງ, ກົມສົ່ງເສີມວິຊາການ ແລະ ປຸງແຕ່ງກະສິກຳ ຂອງກະຊວງກະສິກຳ ແລະ ປ່າໄມ້ ຫລື ຂະ ແໜງປູກຝັງຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງກ່ອນ.
2. ຕ້ອງໄດ້ມີການວາງແຜນການຜະລິດແນວພັນພືດ ເພື່ອກຳນົດໄດ້ວ່າ ແນວພັນຫຍັງທີ່ຈະຜະລິດ, ຈຳນວນຄວາມຕ້ອງການ, ແຫລ່ງທີ່ມາຂອງແນວພັນ, ລະດູການຜະລິດ, ເນື້ອທີ່ຈະຜະລິດ, ຄວາມຕ້ອງການທາງດ້ານປັດໃຈການຜະລິດ, ກະກຽມເງື່ອນໄຂ ສິ່ງອຳນວຍຄວາມສະດວກອື່ນໆ ແລະ ຕະຫລາດຈຳໜ່າຍ ເຫລົ່ານີ້ເປັນຕົ້ນ.
3. ການສະເໜີຂໍຈົດທະບຽນການຜະລິດເມັດພັນພືດຂອງກຸ່ມຜະລິດ

ເພື່ອເປັນບ່ອນອີງໃຫ້ແກ່ການກວດກາການຜະລິດ ແລະ ການຂຶ້ນທະບຽນແນວພັນພືດໃຫ້ແກ່ກຸ່ມ. ຊາວກະສິກອນຜູ້ຜະລິດ ກໍຄືສະມາຊິກຂອງກຸ່ມຕ້ອງໄດ້ສະເໜີ ຂໍຈົດທະບຽນການຜະລິດເມັດພັນເຖິງຫົວໜ້າກຸ່ມເສັຍກ່ອນ ແຕ່ຕົ້ນລະດູການຜະລິດ(***ຕາມແບບຟອມ 1***) ເພື່ອໃຫ້ກຸ່ມສາມາດຮັບຮູ້ ແລະ ກຳໄດ້ເຖິງ ຈຳນວນຄອບຄົວ, ເນື້ອທີ່, ຊະນິດແນວພັນທີ່ຈະຜະລິດ ທັງເພື່ອວາງແຜນຄວາມຕ້ອງການທາງປັດໃຈການຜະລິດ, ງົບທີ່ຕ້ອງການລົງທຶນ ແລະ ຕະຫລາດຮອງຮັບ. ຈາກນັ້ນຫົວໜ້າກຸ່ມຈຶ່ງລວບລວມແລ້ວນຳສະເໜີໄປຂໍຈົດທະບຽນເມັດພັນນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງເປັນກຸ່ມເທື່ອດຽວເພື່ອບໍ່ໃຫ້ຫຍຸ້ງຍາກສັບສົນໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ ເພື່ອລົງມາກວດກາໂຕຈິງ***(ແບບຟອມ2)***

4. ການບັນທຶກຂໍ້ມູນການຜະລິດ

ໃນເມື່ອກຸ່ມຫາກໄດ້ຮັບຈົດທະບຽນເປັນກຸ່ມຜະລິດເມັດພັນແລ້ວເພື່ອເປັນບ່ອນອີງໃຫ້ແກ່ຄະນະກວດກາ ຂອງວິຊາການກະສິກຳ ແລະ ປ່າໄມ້ ເມືອງກ່ຽວກັບ ການອອກໃບຢັ້ງຢືນເມັດພັນ ແລະ ການກວດກາຄຸນນະພາບເມັດພັນ ການກວດກາເອກະສານແມ່ນ ໜ້າວຽກທີ່ຈຳເປັນຂອງພະນັກງານເມືອງ ແລະ ແຂວງ. ສະນັ້ນ, ກຸ່ມຜະລິດຕ້ອງໄດ້ມີການບັນທຶກລະອຽດຂໍ້ມູນກ່ຽວກັບການຜະລິດແຕ່ຕົ້ນລະດູຈົນຮອດຫລັງເກັບກ່ຽວ ແລະ ເກັບກຳຮັກສາເອກກະສານຕ່າງໆກ່ຽວຂອງກັບການຜະລິດເມັດພັນໃນແປງຂອງຕົນເອງ ກ່ຽວກັບສະພາບກ່ອນການຜະລິດເປັນຕົ້ນຂໍ້ມູນ ກ່ຽວກັບສະຖານທີ່ຈະຜະລິດເມັດພັນເພື່ອໃຫ້ຮູ້ໄດ້ວ່າໄປຕາມມາດຕະຖານເງື່ອນໄຂຂອງກົມປູກຝັງກຳນົດໄວ້ບໍ, ຂໍ້ມູນແຕ່ການກຽມດິນ, ຂໍ້ມູນແນວພັນ, ການປູກ, ການບົວລະບັດຮັກສາ ຈົນເຖິງຫລັງເກັບກ່ຽວ ຫລື ຫຸ້ມຫໍ່ ແລະ ເກັບມ້ຽນເພື່ອຂໍຂຶ້ນທະບຽນຕໍ່ໄປ

5. ເງື່ອນໄຂ ແລະມາດຕາຖານຂອງການຜະລິດເມັດພັນເຂົ້າ

- ແນວພັນເຂົ້າທີ່ນຳມາປູກຕ້ອງແມ່ນລຸ້ນ 2 (R2)ທີ່ຊື້ມາຈາກແຫລ່ງຜະລິດແນວພັນສະເພາະຄືຈາກສູນຜະລິດເມັດພັນຂອງສູນກາງ ຫລື ຈາກສູນປະຈຳພາກທີ່ໄດ້ຮັບການຢັ້ງຢືນຖືກຕ້ອງ
- ແປງຜະລິດແນວພັນຕ້ອງມີເນື້ອທີ່ກວ້າງ ຮາບພຽງ ສະໝ່ຳສະເໝີ,
- ດິນອຸດົມສົມບູນດີ, ໃກ້ແຫລ່ງນ້ຳ, ມີແຫລ່ງນ້ຳພຽງພໍຮັບໃຊ້ຕະຫລອດລະດູການຜະລິດ
- ບໍ່ຢູ່ໃນບໍລິເວນຟາມລ້ຽງສັດແລະ ໃກ້ກັບຕົ້ນໄມ້ໃຫຍ່ເກີນໄປ
- ມີເສັ້ນທາງເຂົ້າໄປເຖິງສະດວກສະບາຍ
- ບໍ່ໃຫ້ມີຫລາຍແນວພັນຢູ່ໃນພື້ນທີ່ດຽວ ໂດຍສະເພາະແນວພັນເຂົ້າ ທັງບໍ່ເຄີຍປູກແນວພັນເຂົ້າອື່ນໃນລະດູຜ່ານມາ, ຖ້າເຄີຍປູກກໍຕ້ອງໄດ້ມີມາດຕະການກຽມດິນທີ່ກຳຈັດຮັບປະກັບບໍ່ໃຫ້ເຂົ້າປົນ ແລະ ວັດຊະພືດເກີດຂຶ້ນ
- ມີສິ່ງອຳອວຍຄວາມສະດວກເຊ່ນ: ລານຕາກ ຫລື ຜ້າຢາງ, ເຄື່ອງອັບຂອງຕົນເອງຫລືເຊົ່າ, ເຄື່ອງຄັດເມັດຂອງຕົນເອງຫລືເຊົ່າ, ເລົ້າ ຫລື ສາງເກັບມ້ຽນ, ມີຕະຫລາດຮອງຮັບ,

**ຂັ້ນຕອນທີ2. ການກວດກາພື້ນທີ່ຜະລິດເມັດພັນຂອງຊາວກະສິກອນ ແລະ ກຸ່ມສຳລັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

1. ການກວດກາພື້ນທີ່ຈະຜະລິດເມັດພັນພືດ ຫລືໄຮ່ນາເມື່ອກຸ່ມໄດ້ຮັບໃບສະເໜີ ແລະ ເອກກະສານຂໍຈົດທະບຽນການຜະລິດເມັດພັນຂອງສະມາຊິກໃນກຸ່ມແລ້ວ ຫົວໜ້າກວດກາ ແລະ ຄະນະກວດກາຂອງກຸ່ມ ກຸ່ມຕ້ອງກວດກາເອກກະສານ ຫລືໃບສະເໜີ ເມື່ອກວດກາເອກກະສານຄົບຖ້ວນຖືກຕ້ອງແລ້ວ ຕ້ອງໄດ້ມີການລົງກວດນາພື້ນທີ່ການຜະລິດໂຕຈິງຂອງຊາວກະສິກອນໃນຕົ້ນລະດູການຜະລິດວ່າພື້ນທີ່ໄດ້ຕາມມາດຕະຖານ ເງື່ອນໄຂການຜະລິດເມັດພັນບໍ***(ແບບຟອມ3).***ຫລັງຈາກນັ້ນ ລາຍງານຫົວຫນ້າກຸ່ມຊາບ ແລະ ແລ້ວຈຶ່ງ ສັງລວມຂໍ້ມູນ ແຕ່ລະຄອບຄົວ. ລວມຈຳນວນ, ລາຍຊື່ຜູ້ຜະລິດ, ຊື່ແນວພັນ, ຊະນິດ, ເນື້ອທີ່ຜະລິດແນວພັນທັງໝົດ ແລ້ວສັງລວມ ພ້ອມລວບລວມໃບສະເໜີຂອງສະມາຊິກໄປພ້ອມ ແຈ້ງເປັນລາຍລັກອັກສອນຂອງກຸ່ມເປັນທາງການຄັກແນ່ໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ເມືອງຈຶ່ງ ກວດກາເອກກະສານຂໍ້ມູນຂອງກຸ່ມ ຖ້າຖືກຕ້ອງກໍເຫັນດີ ແລ້ວຈຶ່ງຈົດທະບຽນໃຫ້ແກ່ຄອບຄົວ ຫລືຜູ້ຜະລິດແນວພັນຕາມ***(ແບບຟອມ4).***

2. ການກວດກາຄຸນນະພາບເມັດພັນພືດໃນສວນ ແລະ ໄຮ່ນາ

   ຂັ້ນຕອນດັ່ງກ່າວກໍຖືວ່າເປັນໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງໂດຍປະຕິບັດ ຮ່ວມກັນກັບຄະນະກວດກາຂອງກຸ່ມ ເປັນ2 ໜ້າວຽກຄື:1. ວຽກກວດກາເອກກະສານ ກໍຄືຂໍ້ມູນກ່ຽວກັບການຜະລິດເມັດພັນຂອງຊາວກະສິກອນເອງແຕ່ປູກຈົນເຖິງຫລັງ ເກັບກ່ຽວ. 2. ລົງກວດກາແປງປູກພືດເປັນ3ໄລຍະ: ສຳລັບເຂົ້າມີ ໄລຍະແຕກກໍ, ໄລຍະອອກຮວງ, ໄລຍະສຸກແກ່ ຫລື ໃກ້ເກັບກ່ຽວ, ແຕ່ສຳລັບພືດຜັກ ແລະ ພືດອື່ນໆກໍຄ້າຍຄືກັນເປັນ3ໄລຍະຄື: ໄລຍະເຕີບໂຕ, ອອກດອກ80% ແລະ

ໄລຍະໄກ້ເກັບຜົນຜະລິດ***(ແບບຟອມ5).***ຈາກນັ້ນກຸ່ມກໍຕ້ອງໄດ້ເຮັດສະເໜີຫາຂະແໜງປູກຝັງເພື່ອລົງມາເກັບຕົວຢ່າງ ເມັດພັນໄປວິໃຈຄຸນນະພາບໃນຫ້ອງທົດລອງ ແລະ ອອກການຢັ້ງຢືນຕໍ່ໄປ.

**ຂັ້ນຕອນທີ3. ການກວດກາຄຸນນະພາບເມັດພັນໃນຫ້ອງທົດລອງ ແລະ ການອອກໃບຢັ້ງຢືນ**

ໜ້າວຽກດັ່ງກ່າວ ແມ່ນປະຕິບັດຫລັງຈາກເກັບກ່ຽວ ເປັນສິດ ແລະ ໜ້າທີ່ຂອງຂະແໜງປູກຝັງ ແຂວງ ຫລື ນະຄອນຫລວງ ທີ່ສັງກັດພະແນກກະສິກຳ ແລະ ປ່າໄມ້ເປັນຜູ້ຮັບຜິດຊອບ ແລະ ເຮັດໜ້າທີ່ປະຕິບັດຕາມຄູ່ມືການກວດກາຄຸນນະພາບເມັດເຂົ້າຂອງກົມປູກຝັງສະບັບລົງວັນທີ 26 ຕຸລາ 2016 ຕໍ່ໄປ. ແຕ່ກຸ່ມ ກໍຕ້ອງໄດ້ມີການນຳສະເໜີຫາຫ້ອງການກະສິກຳ-ປ່າໄມ້ເມືອງເພື່ອຊ່ວຍໃນການຊຸ່ມເກັບຕົວຢ່າງເມັດພັນ ຫລັງເກັບກ່ຽວເພື່ອຢັ້ງຢືນຄຸນນະພາບຕາມຂັ້ນຕອນຕໍ່ໄປ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ............................

ເມືອງ.............................

ບ້ານ................................

**ແບບຟອມ1**

ສະເໜີຂໍຈົດທະບຽນຜະລິດເມັດພັນເຂົ້າລຸ້ນ3

ສໍາຫລັບຊາວກະສິກອນ

1. ຊື່ ແລະ ນາມສະກຸນ(ທ້າວ/ນາງ)....................................................ເລກບັດປະຈໍາຕົວ......................

2. ສໍາມະໂນຄົວເລກທີ..........................................ລົງວັນທີ,ເດືອນ,ປີ..............................................

3. ບ້ານຢູ່ປະຈຸບັນ.................................ໜ່ວຍ......... ເມືອງ.......................ແຂວງ..........................

4.ເບີໂທລະສັບ.....................ອີເມວ...............................ສັງກັດກຸ່ມຜະລິດເມັດພັນ..........................

ລະຫັດສະມາຊິກ...............................................................................................................

5. ຂໍ້ມູນການຜະລິດພັນເຂົ້າຂໍຈົດທະບຽນທັງໝົດ

5.1. ລະດູການຜະລິດນາປີ ປີໃດ..........................................ນາແຊງປີໃດ........................................

5.2 ເນື້ອທີ່ນາທັງໝົດ.......................ເຮັດຕາ; ເນື້ອທີ່ຂໍຢັ້ງຢືນຜະລິດແນວພັນເຂົ້າ............................ເຮັກຕາ

5.3.ຊື່ແນວພັນທີ1..................ຈໍານວນ...........ກິໂລ, ແຫລ່ງຊື້ມາ......................ວັນເດືອນປີ ຊື້..............

5.4.ຊື່ແນວພັນທີ2....................ຈໍານວນ...........ກິໂລ, ແຫລ່ງຊື້ມາ.................ວັນເດືອນປີ ຊື້................

5.5.ຊື່ແນວພັນທີ3....................ຈໍານວນ...........ກິໂລ, ແຫລ່ງຊື້ມາ.................ວັນເດືອນປີ ຊື້................

5.6. ວັນ,ເດືອນ,ປີ,ຕົກກ້າ/ປູກ.........................................................................................................

5.7. ວັນ,ເດືອນ,ປີເກັບກ່ຽວ................................, ຄາດຄະເນຜົນຜະລິດ.............................ໂຕນ/ກິໂລ

**4 ຂ້າພະເຈົ້າຂໍຢັ້ງຢືນວ່າ**

- ພື້ນທີ່ການຜະລິດຢູ່ໃນສິດຄອບຄອງຂອງຂ້າພະເຈົ້າຖືກຕ້ອງຕາມກົດໝາຍທຸກປະການ ຫລື ໄດ້ຮັບສິດນໍາໃຊ້ຈາກເຈົ້າຂອງພື້ນທີ
- ຈະປະຕິບັດຕາມຫລັກການ ແລະ ເງື່ອນໄຂຕ່າງໆຂອງການຜະລິເມັດພັນເຂົ້າທີ່ທາງໜ່ວຍງານທີ່ກ່ຽວຂ້ອງກໍານົດໄວ້
- ຍິນຍອມໃຫ້ໜ່ວຍງານທີ່ກ່ຽວຂ້ອງ ຫລື ຄະນະຜູ້ກວດກາປະເມີນເຂົ້າມາກວດກາທົ່ງນາ ເພື່ອອອກໃບຢັ້ງຢືນ
- ຍິນຍອມໃຫ້ເປີດເຜີຍຊື່ ທີ່ຢູ່ ແລະ ແຫລ່ງຜະລິດທີ່ສາມາດຕິດຕໍ່ໄດ້

ຂ້າພະເຈົ້າຂໍຮັບຮອງວ່າ ຂໍ້ມູນຕ່າງໆທີ່ກ່າວມານັ້ນແມ່ນເປັນຄວາມຈິງທຸກປະການ

ລາຍເຊັນຜູ້ຮ້ອງຂໍ................................ຊື່ແຈ້ງ..................................

ວັນທີ່,ເດືອນ,ປີ..................................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ............................

ເມືອງ.............................

ບ້ານ................................

## ແບບຟອມ2

ສະເໜີຂໍຈົດທະບຽນຜະລິດເມັດພັນເຂົ້າລຸ້ນ3

ສໍາຫລັບກຸ່ມ

**1. ຂໍ້ມູນພື້ນຖານຂອງກຸ່ມ**

| |
|---|
| ຊື່ກຸ່ມຜະລິດ ........................................................................................................<br>ບ້ານ:.........................................ເມືອງ:...............................ແຂວງ: ...........................................<br>ໂທລະສັບ.....................................ແຟກ..........................ອີເມວ................................................. |
| ຊື່ຜູ້ຕິດຕໍ່: ......................................................................................<br>ເບີໂທ: ........................................................................................... |

2. ຂໍ້ມູນການຜະລິດພັນເຂົ້າຂໍຈົດທະບຽນທັງໝົດຂອງກຸ່ມ

2.1. ລະດູການຜະລິດນາປີ,ປີໃດ............................................ນາແຊງປີໃດ......................................

2.2 ຈໍານວນສະມາຊິກຂອງກຸ່ມທັງໝົດ...............ຄອບຄົວ (ລາຍລະອຽດລາຍຊື່ສະມາຊິກໃນເອກກະສານຄັດຕິດ1)

2.2 ເນື້ອທີ່ນາທັງໝົດຂອງກຸ່ມ.......................ເຮັດຕາ; ເນື້ອທີ່ຂໍຢັ້ງຢືນຜະລິດແນວພັນເຂົ້າ..................ເຮັກຕາ

2.3.ຊື່ແນວພັນທີ1......................ຈໍານວນ............ກິໂລ, ແຫລ່ງຊື້ມາ......................ວັນເດືອນປີ ຊື້...........

2.4.ຊື່ແນວພັນທີ2....................ຈໍານວນ............ກິໂລ, ແຫລ່ງຊື້ມາ...................ວັນເດືອນປີ ຊື້..............

2.5.ຊື່ແນວພັນທີ3....................ຈໍານວນ............ກິໂລ, ແຫລ່ງຊື້ມາ....................ວັນເດືອນປີ ຊື້.............

2.6. ຄາດໝາຍໄລຍະເວລາຕົກກ້າ/ປູກ ແຕ່ວັນທີ..............................ຫາວັນທີ.......................................

2.7. ຄາດໝາຍໄລຍະເວລາເກັບກ່ຽວ ແຕ່ວັນທີ.......................................ຫາວັນທີ................................

2.8. ຄາດຄະເນຜົນຜະລິດແນວພັນທັງໝົດ...............................ກິໂລ/ໂຕນ.

**4 ຂ້າພະເຈົ້າຂໍຢັ້ງຢືນວ່າ**

- ພື້ນທີ່ການຜະລິດຢູ່ໃນສິດຄອບຄອງຂອງກຸ່ມຂອງຂ້າພະເຈົ້າຖືກຕ້ອງຕາມກົດໝາຍທຸກປະການ ຫລື ໄດ້ຮັບສິດນໍາໃຊ້ຈາກ ເຈົ້າຂອງພື້ນທີ

- ຈະປະຕິບັດຕາມຫລັກການ ແລະ ເງື່ອນໄຂຕ່າງໆຂອງການຜະລິດເມັດພັນເຂົ້າທີ່ທາງໜ່ວຍງານທີ່ກ່ຽວຂ້ອງກຳນົດ
- ຍິນຍອມໃຫ້ໜ່ວຍງານທີ່ກ່ຽວຂ້ອງ ຫລື ຄະນະຜູ້ກວດກາປະເມີນເຂົ້າມາກວດກາທົ່ງນາ ເພື່ອອອກໃບຢັ້ງຢືນ
- ຍິນຍອມໃຫ້ເປີດເຜີຍຊື່ ທີ່ຢູ່ ແລະ ແຫລ່ງຜະລິດທີ່ສາມາດຕິດຕໍ່ໄດ້

ຂ້າພະເຈົ້າຂໍຮັບຮອງວ່າ ຂໍ້ມູນຕ່າງໆທີ່ກ່າວມານັ້ນແມ່ນເປັນຄວາມຈິງທຸກປະການ

ລາຍເຊັນຫົວໜ້າກຸ່ມ.................................ຊື່ແຈ້ງ.............................

ວັນທີ່,ເດືອນ,ປີ.................................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ.............................

ເມືອງ..............................

ບ້ານ.................................

**ແບບຟອມ3**

ການກວດກາປະເມີນເອກກະສານ ແລະ ສະພາບແປງຜະລິດແນວພັນເຂົ້າລຸ້ນ3

1. ຊື່ ແລະ ນາມສະກຸນ ຜູ້ກວດກາ ທ້າວ/ນາງ..................................ມາຈາກພາກສ່ວນ.......................
   ໜ້າທີ່ຮັບຜິດຊອບ................................., ວັນ/ເດືອນ/ປີ ກວດກາ..........................................
2. ລະດູການຜະລິດ ☐ ນາປີ ☐ ນາແຊງ,
3. ຊື່ ແລະ ນາມສະກຸນຜູ້ຜະລິດ...............................................................................
4. ຊື່ແນວພັນ1.......................ຈຳນວນ.................ກິໂລ.ເນື້ອທີ່ຜະລິດ......................ເຮັກຕາ
   ຊື່ແນວພັນ2.......................ຈຳນວນ.................ກິໂລ.ເນື້ອທີ່ຜະລິດ......................ເຮັກຕາ
   ຊື່ແນວພັນ3.......................ຈຳນວນ.................ກິໂລ. ເນື້ອທີ່ຜະລິດ......................ເຮັກຕາ
5. ສະພາບໄຮ່ນາເຂົ້າ:
   - ☐ ດິນດີ ☐ ດິນປານກາງ ☐ ດິນບໍ່ງາມ,
   - ☐ ນ້ຳສະດວກ ☐ ບໍ່ສະດວກ
   - ☐ ມີຕົ້ນໄມ້ໃຫຍ່ ☐ ບໍ່ມີຕົ້ນໄມ້ ☐ ທົ່ງນາສະອາດດີ ☐ ພໍໃຊ້ໄດ້ ☐ ຣິກເຮື້ອ
   - ☐ ໃກ້ຟາມສັດລ້ຽງ ☐ ໄກຟາມສັດລ້ຽງ ຫລືບໍ່ມີ
   - ☐ ຫຍ້າໜ້ອຍ ☐ ຫຍ້າປານກາງ ☐ ຫຍ້າຫລາຍ ☐ ບັນຫາອື່ນໆ
6. ຄວາມຄິດເຫັນຂອງກຳມະການ
   -ໄດ້ມາດຕະຖານການຜະລິດແນວພັນ ☐ ຜ່ານ
   - ບໍ່ໄດ້ມາດຕະຖານການຜະລິດແນວພັນ ☐ ບໍ່ຜ່ານ ☐ ຜ່ານ ແຕ່ຕ້ອງໄດ້ປະຕິບັດດັ່ງລຸ່ມນີ້:
   1.....................................................................................................................................
   2....................................................................................................................................
   3. ..................................................................................................................................

ທີ່......................ວັນ/ເດືອນ/ປີ.............

ເຊັນແລະຊື່ຜູ້ກວດກາການຜະລິດແນວພັນເຂົ້າ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=====000=====

ພະແນກກະສິກຳ ແລະ ປ່າໄມ້ແຂວງ......

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ........ ເລກທີ................./................

ວັນທີ.ເດືອນ.ປີ..........................

## ແບບຟອມ4

## ໃບຈົດທະບຽນ

### ຜູ້ຜະລິດແນວພັນເຂົ້າແນວພັນລຸ້ນ3 (ສຳລັບກຸ່ມ)

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ແນວພັນພືດ ສະບັບ ເລກທີ3919/ກປ,ລົງວັນທີ 12 ທັນວາ 2012
- ອີງຕາມຄູ່ມືການກວດສອບຄຸນນະພາບເມັດພັນເຂົ້າຂອງກົມປູກຝັງ ສະບັບລົງວັນທີ 26 ຕຸລາ 2016
- ອີງຕາມບົດແນະນຳກ່ຽວກັບການອອກໃບຢັ້ງຢືນຄຸນນະພາບເມັດພັນເຂົ້າຂອງກົມປູກຝັງສະບັບລົງວັນທີ 30 ເມສາ 2013
- ອີງຕາມການລາຍງານຜົນການຕິດຕາມຂອງຄະນະຕິດຕາມກວດກາການຜະລິດແນວພັນເຂົ້າຄັ້ງວັນທີ, ເດືອນ, ປີ .......................................................................................................................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ............................ ແຂວງ........................ໄດ້ຈົດທະບຽນການຜະລິດແນວພັນເຂົ້າ ໃຫ້ແກ່ກຸ່ມຜະລິດເມັດພັນ.................................ບ້ານ....................................ເມືອງ....................................... ແຂວງ.................................,ຊື່ ຫົວໜ້າກຸ່ມ......................................ເບີໂທລະສັບ..................................... ທະບຽນເລກທີ....................................ຊື່ແນວພັນ1.................................... 2....................................... 3....................................ທີ່ມາຂອງແແນວພັນ..................................ເນື້ອທີ່ການຜະລິດທັງໝົດ................ເຮັກຕາ, ຄາດຄະເນຜົນຜະລິດ.........................................ໂຕນ; ລະດູການຜະລິດ............................................................... ສະຖານທີ່ທຳການຜະລິດ.........................................................................................................................

ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ.............................
ເມືອງ.............................
ບ້ານ................................

**ແບບຟອມ5**

ການກວດກາປະເມີນແປງຜະລິດແນວພັນເຂົ້າລຸ້ນ3

1. ຊື່ ແລະ ນາມສະກຸນ ຜູ້ກວດກາ ທ້າວ/ນາງ..................................ມາຈາກພາກສ່ວນ.......................
   ໜ້າທີ່ຮັບຜິດຊອບ................................, ວັນ/ເດືອນ/ປີ ກວດກາ.........................ຄັ້ງທີ.................
2. ລະດູການຜະລິດ ☐ ນາປີ ☐ ນາແຊງ,
3. ຊື່ ແລະ ນາມສະກຸນຜູ້ຜະລິດ..........................................................................
4. ຊື່ແນວພັນ1.................................ເນື້ອທີ່ຜະລິດ.........................ເຮັກຕາ, ຊື່ແນວພັນ2..........................
   ເນື້ອທີ່ຜະລິດ......................ເຮັກຕາ, ຊື່ແນວພັນ3.................... ເນື້ອທີ່ຜະລິດ......................ເຮັກຕາ
5. ສະພາບໄຮ່ນາເຂົ້າ:
   - ☐ ດິນດີ ☐ ດິນປານກາງ ☐ ດິນບໍ່ງາມ, ☐ ນ້ຳສະດວກ ☐ ບໍ່ສະດວກ
   - ☐ ມີຕົ້ນໄມ້ໃຫຍ່ ☐ ບໍ່ມີຕົ້ນໄມ້ ☐ ທົ່ງນາສະອາດດີ ☐ ຮົກເຮື້ອ
   - ☐ ໃກ້ຟາມສັດລ້ຽງ ☐ ໄກຟາມສັດລ້ຽງ ຫລືບໍ່ມີ

6. ສະພາບຂອງເຂົ້າ
   - ເຂົ້າ: ☐ ງາມດີ ☐ ປານກາງ ☐ ບໍ່ງາມ
   - ເຂົ້າປົນ: ☐ ມີຫລາຍ ☐ ປານກາງ ☐ ມີໜ້ອຍ ☐ ບໍ່ມີ
   - ຫຍ້າ: ☐ ມີຫລາຍ ☐ ປານກາງ ☐ ມີໜ້ອຍ ☐ ບໍ່ມີ
   - ສັດຕູພືດ:
     - ແມງໄມ້: ....................... ☐ ມີ ການທຳລາຍ.......... ☐ ບໍ່ມີ
     - ພະຍາດ:......................... ☐ ມີ ການທຳລາຍ..........% ☐ ບໍ່ມີ
     - ໜູ: .......................... ☐ ມີ ການທຳລາຍ..........% ☐ ບໍ່ມີ

7. ຄວາມຄິດເຫັນຂອງກຳມະການ

-ໄດ້ມາດຕະຖານການຜະລິດແນວພັນ ☐ ຜ່ານ

- ບໍ່ໄດ້ມາດຕະຖານການຜະລິດແນວພັນ ☐ ບໍ່ຜ່ານ

- ☐ ຜ່ານ ແຕ່ຕ້ອງໄດ້ປະຕິບັດດັ່ງລຸ່ມນີ້:

1.................................................................................................................................

2................................................................................................................................

3. ...............................................................................................................................

ທີ່......................ວັນ/ເດືອນ/ປີ..............

ເຊັນແລະຊື່ຜູ້ກວດກາການຜະລິດແນວພັນເຂົ້າ